**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0942/ກປ

ນະຄອນຫຼວງວຽງຈັນ, ວັນທີ 13 FEB 2025

# ຄຳແນະນຳ
# ກ່ຽວກັບ ການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານ ຂອງຂະແໜງການກະສິກຳ ແລະ ປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງ ກົມກວດກາ ສະບັບເລກທີ 0655/ກກ, ລົງວັນທີ 10 ທັນວາ 2024;
- ອີງຕາມ ໜັງສືສະເໜີຂອງຫ້ອງການ ສະບັບເລກທີ 0415/ຫກ, ລົງວັນທີ 30 ມັງກອນ 2025.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບັນດານິຕິກຳທີ່ໄດ້ກຳນົດອອກໃນແຕ່ລະໄລຍະ, ຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານກວດກາ ຢູ່ໃນຂະແໜງການກະສິກຳ ແລະ ປ່າໄມ້ ຕາມພາລະບົດບາດ, ແຜນການ, ໂຄງການລົງທຶນຂອງລັດ ທຸກປະເພດທີ່ນຳໃຊ້ງົບປະມານແຫ່ງລັດ, ທຶນສົມທົບ, ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກພາຍໃນ ຫຼື ຕ່າງປະເທດ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບ, ກົດໝາຍ ແລະ ຈຸດປະສົງຂອງໂຄງການ ກໍຄືແຜນການກິດຈະກຳທີ່ໄດ້ກຳນົດໄວ້ ແນໃສ່ຕອບສະໜອງຜົນໄດ້ຮັບ ແລະ ຜົນປະໂຫຍດລວມຂອງຊາດ ແລະ ປະຊາຊົນ, ປ້ອງກັນການລະເມີດລະບຽບ, ກົດໝາຍ ແລະ ສະກັດກັ້ນພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງ ເຮັດໃຫ້ການລົງທຶນຂອງລັດ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໄດ້ຮັບການປະຕິບັດດ້ວຍຄວາມໂປ່ງໃສ, ປະຢັດ ແລະ ມີປະສິດທິຜົນສູງ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### I. ຈຸດປະສົງ ແລະ ລະດັບຄາດໝາຍ

1. ເພື່ອເປັນບ່ອນອີງໃຫ້ແກ່ ຄະນະຕິດຕາມ ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ທີ່ໄດ້ຮັບການແຕ່ງຕັ້ງຈາກກະຊວງກະສິກຳ ແລະ ປ່າໄມ້ ໃນການເຄື່ອນໄຫວຕິດຕາມ, ກວດກາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ແນໃສ່ເຮັດໃຫ້ມີຄວາມໂປ່ງໃສ, ຊັດເຈນ, ແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງ, ການລະເມີດກົດໝາຍ ແລະ ລະບຽບການຂອງລັດ ພ້ອມທັງແກ້ໄຂຜົນຂອງການກວດກາໃຫ້ທັນເວລາ;

2. ເພື່ອໃຫ້ຜູ້ປະຕິບັດໂຄງການລົງທຶນຂອງລັດ ໃນຂະແໜງການກະສິກຳ ແລະ ປ່າໄມ້ ຮັບຮູ້, ເຂົ້າໃຈເປັນເອກະພາບ, ເປັນເຈົ້າການໃນການປະສານງານກັບຄະນະກວດກາ ດ້ວຍຄວາມຮັບຜິດຊອບສູງ ຮັບປະກັນໃຫ້ການຕິດຕາມ, ກວດກາ ເປັນໄປຕາມແຜນການທີ່ໄດ້ກຳນົດໄວ້;
3. ເພື່ອເປັນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
4. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານກວດກາລັດ ແລະ ວຽກງານຕ້ານການສໍ້ລາດບັງຫຼວງ ມີປະສິດທິພາບ ແລະ ປະສິດທິຜົນສູງ ມີງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ ໃຫ້ແກ່ວຽກງານກວດກາເລີ່ມແຕ່ຫົວທີຂອງທຸກໆໂຄງການ.

## II. ຮູບແບບການຕິດຕາມ, ກວດກາ

ການຕິດຕາມ, ກວດກາ ໃນຂະແໜງການກະສິກຳ ແລະ ປ່າໄມ້ ປະກອບດ້ວຍ ການຕິດຕາມ, ກວດກາ ແບບປົກກະຕິ ຊຶ່ງລວມທັງການຕິດຕາມ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ, ການຕິດຕາມ, ກວດກາຕາມຄຳສັ່ງ ຫຼື ຄຳສະເໜີ ແລະ ການຕິດຕາມ, ກວດກາແບບກະທັນຫັນ.

### 1. ການຕິດຕາມ, ກວດກາ ແບບປົກກະຕິ

ການຕິດຕາມ, ກວດກາແບບປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ໂດຍການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ ຊຶ່ງລວມທັງການຕິດຕາມ, ກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ເພື່ອໃຫ້ຮູ້, ເຫັນ ແລະ ກຳໄດ້ສະພາບການ, ຂໍ້ມູນໃນ ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານ, ການປະຕິບັດລະບຽບການດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງ, ຜົນກວດສອບ ຕາມຄຳສະເໜີຂອງອົງການກວດສອບແຫ່ງລັດ ໃນກໍລະນີຈຳເປັນ, ຮີບດ່ວນ, ຕາມມະຕິກອງປະຊຸມ ຂອງສະພາແຫ່ງຊາດ, ມະຕິກອງປະຊຸມ ຂອງສະພາປະຊາຊົນຂັ້ນແຂວງ ດ້ວຍການນຳໃຊ້ວິທີການຕົ້ນຕໍ ດັ່ງນີ້:

1) ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ພາລະບົດບາດ ແລະ ແຜນການປະຈຳປີ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;
2) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເອກະພາບໃນການກະກຽມແຜນການ, ວາລະການເຄື່ອນໄຫວ, ຮ່າງບົດບັນທຶກ, ຄຳຖາມເຈາະຈີ້ມ ແລະ ເປົ້າໝາຍຖືກກວດກາ ຕ້ອງໃຫ້ຄວາມຮ່ວມມືໃນການກະກຽມບັນດາເອກະສານທີ່ຄະນະກວດກາຕ້ອງການ ພ້ອມທັງອຳນວຍຄວາມສະດວກ ໃນການສະໜອງຂໍ້ມູນເອກະສານຕ່າງໆ;
3) ສະເໜີຕໍ່ ຄະນະພັກ, ຄະນະຊີ້ນຳ ແຈ້ງຈຸດປະສົງ, ຂໍ້ຕົກລົງ ແລະ ແຜນການເຄື່ອນໄຫວວຽກງານ ຂອງຄະນະຕິດຕາມ, ກວດກາ ພ້ອມທັງໃຫ້ເປົ້າໝາຍແຕ່ງຕັ້ງຄະນະຮ່ວມເຮັດວຽກ;
4) ຕີລາຄາໄຈ້ແຍກໃຫ້ເຫັນໄດ້ ດ້ານດີ, ຜົນງານ, ດ້ານອ່ອນ, ຂໍ້ຄົງຄ້າງ, ບັນດາຂໍ້ສະເໜີຕ່າງໆ ຂອງເປົ້າໝາຍ ແລະ ຂໍ້ສະເໜີວິທີການແກ້ໄຂຂອງຄະນະລົງຕິດຕາມ, ກວດກາ;
5) ສະຫຼຸບຜົນການຕິດຕາມ, ກວດກາ ເພື່ອຄວາມເປັນເອກະພາບກັນ ແລະ ເຊັນບົດບັນທຶກຮ່ວມກັນ, ຫຼັງຈາກນັ້ນຈຶ່ງລາຍງານໃຫ້ຂັ້ນເທິງຊາບ ເພື່ອພິຈາລະນາແກ້ໄຂ.

### 2. ການຕິດຕາມ, ກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ

ການຕິດຕາມ, ກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ ແມ່ນການຕິດຕາມ, ກວດກາ ຕາມມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນເທິງ ລວມທັງຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມກົດໝາຍ ແລະ ລະບຽບການ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ ດ້ວຍການນຳໃຊ້ວິທີການຕົ້ນຕໍ ດັ່ງນີ້:

1) ສະເໜີຕໍ່ຄະນະພັກ, ຄະນະຊີ້ນຳ ແຈ້ງຈຸດປະສົງ, ຂໍ້ຕົກລົງ ແລະ ແຜນການເຄື່ອນໄຫວວຽກງານຂອງຄະນະຕິດຕາມ, ກວດກາ ພ້ອມທັງໃຫ້ເປົ້າໝາຍແຕ່ງຕັ້ງຄະນະຮ່ວມເຮັດວຽກ;
2) ເກັບກຳ ທ້ອນໂຮມບັນດານິຕິກຳທີ່ກ່ຽວຂ້ອງ, ກວດກາພິສູດຂໍ້ມູນ ທີ່ນຳໃຊ້ ເຂົ້າໃນການຕິດຕາມ, ກວດກາຕົວຈິງ ທີ່ໄດ້ກຳນົດໄວ້ໃນແຜນການເຄື່ອນໄຫວ;

3) ຄົ້ນຄວ້າ, ວິເຄາະ, ວິໄຈ, ຕີລາຄາ, ຂໍ້ມູນ ສົມທຽບຂໍ້ມູນໃຫ້ຊັດເຈນ, ພາວະວິໄສ ແລະ ຄົບຖ້ວນ ເພື່ອເປັນພື້ນຖານໃຫ້ແກ່ການສະຫຼຸບຕາມເນື້ອໃນກວດກາ;
4) ສະຫຼຸບລາຍງານຜົນການຕິດຕາມ, ກວດກາ ຢ່າງລະອຽດ ໂດຍສະເພາະ ການສະຫຼຸບແຜນການທີ່ກຳນົດໄວ້ໃນການກວດກາ ແລະ ດຳເນີນການກວດກາຕົວຈິງ, ຊີ້ໃຫ້ເຫັນຜົນການຕິດຕາມ, ກວດກາ ພ້ອມທັງສົມທຽບໃສ່ ບັນດານິຕິກຳ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ຂໍທິດຊີ້ນຳຂັ້ນເທິງກ່ອນສະເໜີວິທີການແກ້ໄຂ ຫຼື ມາດຕະການແກ້ໄຂ ເພື່ອຄວາມເປັນເອກະພາບ ແລະ ລົງລາຍເຊັນຮ່ວມກັນ.

**3. ການຕິດຕາມ, ກວດກາ ແບບກະທັນຫັນ**

ການຕິດຕາມ, ກວດກາ ແບບກະທັນຫັນ ແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍ ຖືກກວດ ຮູ້ລ່ວງໜ້າ. ສຳລັບເນື້ອໃນການຕິດຕາມ, ກວດກາ ແບບກະທັນຫັນ ແມ່ນຄືກັນກັບເນື້ອໃນການຕິດຕາມ, ກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**4. ການຕິດຕາມ, ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ**

ການຕິດຕາມ, ກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ແມ່ນການຕິດຕາມ, ກວດກາ ປົກກະຕິຕໍ່ຜູ້ປະຕິບັດໂຄງການ ເພື່ອໃຫ້ຮູ້, ເຫັນ ແລະ ກຳໄດ້ສະພາບການ, ຂໍ້ມູນໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ນັບແຕ່ເລີ່ມຕົ້ນໂຄງການເປັນຕົ້ນໄປ.

ໂຄງການລົງທຶນຂອງລັດທີ່ຕ້ອງຕິດຕາມ, ກວດກາ ແມ່ນທຸກໂຄງການທີ່ນຳໃຊ້ງົບປະມານແຫ່ງລັດ, ທຶນສົມທົບ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ ໃນຂະແໜງການກະສິກຳ ແລະ ປ່າໄມ້ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ດ້ວຍການນຳໃຊ້ວິທີການຕົ້ນຕໍ ດັ່ງນີ້:

1) ປະສານ ແລະ ສະເໜີແຜນການໃຫ້ເຈົ້າຂອງໂຄງການ, ຜູ້ປະຕິບັດໂຄງການ ເປັນລາຍລັກອັກສອນ ພ້ອມທັງມີຄຳຖາມເຈາະຈີ້ມ, ຊັກຖາມ, ບັນທຶກການລາຍງານ ແລະ ການມອບ-ຮັບເອກະສານຕ່າງໆ ຂອງໂຄງການ ເພື່ອໃຫ້ມີຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃນການຈັດຕັ້ງປະຕິບັດແຜນການ, ໜ້າວຽກ ແລະ ຂັ້ນຕອນຕ່າງໆ;
2) ເປົ້າໝາຍທີ່ຖືກກວດກາ ຕ້ອງໃຫ້ຄວາມຮ່ວມມືຕໍ່ຄະນະກວດກາ ໃນການກວດກາບັນດາເອກະສານຕ່າງໆ ເປັນຕົ້ນ ບົດສະເໜີໂຄງການ, ສັນຍາໂຄງການ, ການປະຕິບັດແຜນການ ແລະ ກິດຈະກຳຕ່າງໆ ຂອງໂຄງການ, ການຈັດຈ້າງບໍລິສັດທີ່ປຶກສາ, ຊ່ຽວຊານ ແລະ ພະນັກງານຕາມສັນຍາ, ການປະມູນການກໍ່ສ້າງສ້ອມແປງ, ການຈັດຊື້-ຈັດຈ້າງພາຫະນະ, ອຸປະກອນຮັບໃຊ້, ເອກະສານບັນຊີຊັບສິນ ແລະ ເອກະສານທາງດ້ານການເງິນ ພ້ອມທັງລາຍງານ, ອະທິບາຍ, ຊີ້ແຈງ ບັນຫາທີ່ຍັງບໍ່ທັນຈະແຈ້ງ ໃນກໍລະນີທີ່ພົບເຫັນບັນຫາທີ່ເຫັນວ່າມີຄວາມສ່ຽງໃນການສໍ້ລາດບັງຫຼວງ;
3) ຄະນະກວດກາ ເປັນຜູ້ຕີລາຄາໄຈ້ແຍກໃຫ້ເຫັນໄດ້ ດ້ານດີ, ຜົນງານ, ດ້ານອ່ອນ, ຂໍ້ຄົງຄ້າງ ຂອງຜູ້ປະຕິບັດໂຄງການ, ບັນດາໜ້າວຽກໂຄງການ ແລະ ຂໍ້ສະເໜີວິທີການແກ້ໄຂ;
4) ການສະຫຼຸບຜົນການຕິດຕາມ ກວດກາ ຕ້ອງໄດ້ຜ່ານກັນພາຍໃນຄະນະຕິດຕາມ ກວດກາ, ຜູ້ປະຕິບັດໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄວາມເປັນເອກະພາບກັນ ແລະ ເຊັນບົດບັນທຶກຮ່ວມກັນ, ຫຼັງຈາກນັ້ນ ຈຶ່ງລາຍງານໃຫ້ຂັ້ນເທິງຮັບຊາບ ແລະ ສົ່ງຜົນການກວດກາ ໃຫ້ຜູ້ປະຕິບັດໂຄງການຊາບ ແລະ ຈັດຕັ້ງປະຕິບັດໂດຍມີການຕິດຕາມ, ກວດກາ ຢ່າງເຂັ້ມງວດ.

**III. ການຕ້ານການສໍ້ລາດບັງຫຼວງ**

ການຕ້ານການສໍ້ລາດບັງຫຼວງ ແມ່ນການກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອບໍ່ໃຫ້ຊັບສິນຂອງລັດ, ລວມໝູ່, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ ຖືກເສຍຫາຍ, ຖືກຍັກຍອກ ຫຼື ສໍ້ໂກງ, ນຳເອົາຜູ້ກະທຳຜິດ ມາດຳເນີນຄະດີ ແລະ ປົກ

ປ້ອງຜູ້ບໍລິສຸດ ແນໃສ່ເຮັດໃຫ້ວຽກງານລັດ ມີຄວາມໂປ່ງໃສ, ເຂັ້ມແຂງ ແລະ ສາມາດກວດກາໄດ້ທຸກເວລາ, ໃນກໍລະນີ ພົບເຫັນພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງໃດໜຶ່ງ ດັ່ງນີ້:

1) ການຍັກຍອກຊັບຂອງລັດ ຫຼື ລວມໝູ່;
2) ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່;
3) ການໃຫ້ສິນບົນ;
4) ການຮັບສິນບົນ;
5) ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
6) ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່;
7) ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
8) ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ອອກແບບ, ຄິດໄລ່ ແລະ ອື່ນໆ;
9) ການໂກງການປະມູນ ຫຼື ການສຳປະທານ;
10) ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ;
11) ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ;
12) ການກົດໜ່ວງ, ຖ່ວງດຶງເອກະສານ.

ການດຳເນີນການກວດກາ ແລະ ການສໍ້ລາດບັງຫຼວງ ຕ້ອງປະຕິບັດຕາມ ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຢ່າງເຂັ້ມງວດ ດ້ວຍການນຳໃຊ້ວິທີການຕົ້ນຕໍ ດັ່ງນີ້:

1) ຄົ້ນຄວ້າ ແຈ້ງການ, ແຈ້ງຄວາມ, ລາຍງານ, ການສະເໜີ ຫຼື ຄຳຮ້ອງຟ້ອງ ແລະ ລົງເກັບກຳຂໍ້ມູນ ຖ້າເຫັນວ່າມີຄວາມຈຳເປັນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ສະບັບເລກທີ 17/ສພຊ, ລົງວັນທີ 07 ກໍລະກົດ 2022 ທີ່ກຳນົດໃຫ້ ຄຳຮ້ອງທຸກ ມີຊື່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ລາຍໂປ້ມືຂອງຜູ້ຮ້ອງທຸກ ແລະ ສະຖານທີ່ຂອງວຽກງານທີ່ກ່ຽວຂ້ອງ ຊຶ່ງຜູ້ຮ້ອງທຸກຍື່ນເຖິງ;
2) ກະກຽມ ແລະ ສ້າງແຜນການລົງກວດກາຕົວຈິງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
3) ກວດກາເອກະສານ ແລະ ຊັບສິນ ຂອງບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຕົ້ນ ກວດກາການເງິນ-ການບັນຊີ, ລາຍຮັບ-ລາຍຈ່າຍ, ການໃຊ້ຈ່າຍທຶນຊ່ວຍເຫຼືອ ແລະ ເງິນກູ້ຢືມ;
4) ຮຽກເຊີນຜູ້ຕາງໜ້າການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງ ມາອະທິບາຍໃຫ້ຄວາມກະຈ່າງແຈ້ງ;
5) ສະຫຼຸບ, ຕີລາຄາ ແລະ ລາຍງານຜົນຂອງການກວດກາ.

ການແຈ້ງຊັບສິນ ແມ່ນຜູ້ມີຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ກ່ອນ ແລະ ຫຼັງຮັບຕຳແໜ່ງ, ໜ້າທີ່ຕ້ອງແຈ້ງຊັບສິນ ແລະ ໜີ້ສິນຂອງຕົນ, ຂອງຜົວ ຫຼື ເມຍ ແລະ ລູກ ທີ່ຢູ່ໃນການຄຸ້ມຄອງຂອງຕົນຢ່າງຊັດເຈນ, ສັດຊື່ບໍລິສຸດ ແລະ ມີຄວາມຮັບຜິດຊອບຕໍ່ກົດໝາຍ ກ່ຽວກັບເນື້ອໃນການແຈ້ງນັ້ນ.

## IV. ກົນໄກການປະສານງານ

1) ກົມກວດກາ, ຂະແໜງກວດກາລັດ ແລະ ໜ່ວຍງານກວດກາລັດແຕ່ລະຂັ້ນ, ນັບແຕ່ສູນກາງຮອດທ້ອງຖິ່ນໃນຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບບັນດາເປົ້າໝາຍທີ່ຖືກກວດກາ ຮ່ວມກັນຈັດຕັ້ງປະຕິບັດຕາມ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2) ເປົ້າໝາຍທີ່ຖືກກວດກາ ອຳນວຍຄວາມສະດວກ ພ້ອມທັງໃຫ້ຄວາມຮ່ວມມື ໃນການລົງຕິດຕາມ ກວດກາ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ ແລະ ຄຳແນະນຳສະບັບນີ້;
3) ກົມກວດກາ ເປັນເຈົ້າການໂຄສະນາ, ເຜີຍແຜ່ ແລະ ຊຸກຍູ້ ບັນດາໂຄງການລົງທຶນຂອງລັດ ໃຫ້ປະບັດຕາມຄຳແນະນຳສະບັບນີ້ຢ່າງເຂັ້ມງວດ;
4) ຄະນະກວດກາ ໂຄງການລົງທຶນຂອງລັດ ຈະບໍ່ປະກອບເຂົ້າໃນຄະນະຈັດຕັ້ງປະຕິບັດໂຄງການ ເປັນຕົ້ນ ຄະນະຊີ້ນຳໂຄງການ, ຄະນະກຳມະການປະມູນ, ຄະນະກຳມະການສົມທຽບລາຄາ ໃນການຈັດຊື້-ຈັດຈ້າງ ແລະ

ຄະນະຄຸ້ມຄອງການເງິນໂຄງການ ໂດຍມີການແຕ່ງຕັ້ງເປັນຄະນະຕິດຕາມ, ກວດກາ, ສັງເກດການສະເພາະເລີ່ມແຕ່ທີ່ອິທີ.

## V. ງົບປະມານຮັບໃຊ້ ໃນການເຄື່ອນໄຫວເຂົ້າໃນວຽກງານກວດກາ

1) ງົບປະມານຮັບໃຊ້ເຂົ້າວຽກງານຕິດຕາມ, ກວດກາ ວຽກງານບໍລິຫານລັດ ແມ່ນງົບປະມານທີ່ໄດ້ກຳນົດໄວ້ໃນແຜນການປະຈຳປີ, ຂັ້ນກະຊວງ ແມ່ນນຳໃຊ້ງົບປະມານບ້ວງດັດສົມ-ສົ່ງເສີມ ຕາມການຈັດແບ່ງປະຈຳປີຂອງຫ້ອງການ, ບັນດາກົມ, ສະຖາບັນ ແລະ ທີ່ອໜ່ວຍວິຊາການ ລະດັບສອງ ທີ່ຂຶ້ນກັບກະຊວງ, ການເຄື່ອນໄຫວກວດກາ ຂອງຂະແໜງກວດກາລັດ ຂັ້ນແຂວງ ແມ່ນນຳໃຊ້ງົບປະມານ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ໜ່ວຍງານກວດກາ ຂັ້ນເມືອງ ແມ່ນນຳໃຊ້ງົບປະມານຂອງ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕາມການແບ່ງຂັ້ນຄຸ້ມຄອງ;
2) ການຕິດຕາມ, ກວດກາ ບັນດາໂຄງການລົງທຶນຂອງລັດ ປະກອບດ້ວຍງົບປະມານແຫ່ງລັດ, ທຶນສົມທົບ, ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມ ຈາກພາຍໃນ ຫຼື ຕ່າງປະເທດ ໂດຍປະຕິບັດ ດັ່ງນີ້:
   - ໂຄງການທີ່ກຳລັງຈັດຕັ້ງປະຕິບັດ ແລະ ຍັງບໍ່ທັນສິ້ນສຸດໂຄງການ ຕ້ອງໄດ້ຮັບຜິດຊອບ ອຳນວຍຄວາມສະດວກດ້ານພາຫະນະ ແລະ ວັດຖຸປະກອນຮັບໃຊ້ທີ່ຈຳເປັນ ສະໜອງໃຫ້ແກ່ວຽກງານກວດກາ;
   - ບັນດາໂຄງການລົງທຶນຂອງລັດ ທີ່ເລີ່ມຕົ້ນການອອກແບບໂຄງການໃໝ່ ຕ້ອງໄດ້ຮັບຜິດຊອບ ອຳນວຍຄວາມສະດວກດ້ານພາຫະນະ ແລະ ວັດຖຸປະກອນຮັບໃຊ້ທີ່ຈຳເປັນ ສະໜອງໃຫ້ແກ່ວຽກງານກວດກາ ເພື່ອນຳໃຊ້ເຂົ້າໃນວຽກງານກວດກາເລີ່ມແຕ່ທີ່ອິທີ ຕາມດຳລັດ ວ່າດ້ວຍການຕິດຕາມ ກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ທີ່ອິທີ ສະບັບເລກທີ 01/ລບ, ລົງວັນທີ 06 ມັງກອນ 2015.

## VI. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1) ໃຫ້ ກົມກວດກາ ເປັນເຈົ້າການປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ, ທີ່ອໜ່ວຍວິຊາການລະດັບສອງ ແລະ ລັດວິສາຫະກິດບໍລິການກະສິກຳ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ທີ່ເປັນຜູ້ຮັບຜິດຊອບໂຄງການລົງທຶນຂອງລັດ ພ້ອມກັນຈັດຕັ້ງປະຕິບັດຕາມ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2) ບັນດາຂະແໜງກວດກາລັດ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ໜ່ວຍງານກວດກາລັດຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດຕາມ ຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ;
3) ພາຍຫຼັງທີ່ໄດ້ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຫາກມີບັນຫາຫຍຸ້ງຍາກປະການໃດ ໃຫ້ລາຍງານຂັ້ນເທິງເພື່ອປັບປຸງແກ້ໄຂໃຫ້ທັນສະພາບການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 03 ເມສາ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ລິນຄຳ ດວງສະຫວັນ